**ດ່ວນ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

----===000===----

ກະຊວງໂຍທາທິການ ແລະຂົນສົ່ງ
ຫ້ອງການ

17151

ເລກທີ:................../ຍທຂ.ຫກ

ນະຄອນຫລວງວຽງຈັນ, ວັນທີ:.......15 OCT 2012.....

**ຮຽນ:** ທ່ານຫົວໜ້າກອງເລຂາຄະນະຮັບຜິດຊອບຊີ້ນຳເຮັດທົດລອງສາມສ້າງຂັ້ນສູນກາງ ທີ່ນັບຖື.

**ເລື່ອງ:** ການລາຍຄວາມຄືບໜ້າການຈັດຕັ້ງເຮັດທົດລອງສາມສ້າງຂອງຂະແໜງ ຍທຂ.

- ອີງຕາມບົດເຊີນຂອງກອງເລຂາຄະນະຮັບຜິດຊອບຊີ້ນຳເຮັດທົດລອງສາມສ້າງຂັ້ນສູນກາງ, ສະບັບເລກທີ 03/ຄຊທສ.ກລຂ, ລົງວັນທີ 11/03/2012.

ຫ້ອງການກະຊວງໂຍທາທິການ ແລະຂົນສົ່ງ ໃນນາມຄະນະວິຊາການຊ່ວຍວຽກເຮັດທົດລອງສາມສ້າງຂອງກະຊວງ ຍທຂ ຂໍຖືເປັນກຽດລາຍງານມາຍັງທ່ານຊາບ ກ່ຽວກັບຄວາມຄືບໜ້າການຈັດຕັ້ງເຮັດທົດລອງສາມສ້າງຂອງຂະແໜງ ຍທຂ ແຕ່ວັນທີ 15/9-15/10/2012 ແລະແຜນການໃນເດືອນຕໍ່ໄປ, ຊຶ່ງມີລາຍລະອຽດດັ່ງນີ້:

- **ການຈັດຕັ້ງປະຕິບັດວຽກງານສາມສ້າງ ແຕ່ວັນທີ 15/9-15/10/2012:**

1. ໄດ້ມີຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງ ຍທຂ ວ່າດ້ວຍການຜັນຂະຫຍາຍການເຮັດທົດລອງສາມສ້າງຂອງຂະແໜງ ຍທຂ, ສະບັບເລກທີ 15562/ຍທຂ, ລົງວັນທີ 17/9/2012, ພ້ອມທັງໄດ້ຈັດສົ່ງຄຳສັ່ງແນະນຳດັ່ງກ່າວ ໄປໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດແລ້ວ.
2. ສຳເລັດໂດຍພື້ນຖານການຮ່າງແຜນດຳເນີນງານລະອຽດ ໃນການຈັດຕັ້ງເຮັດທົດລອງສາມສ້າງຂອງຂະແໜງ ຍທຂ, ປະຈຸບັນໄດ້ຜ່ານການພິຈາລະນາ ແລະຮັບຮອງຈາກຄະນະນຳກະຊວງແລ້ວ ເພື່ອລົງລາຍເຊັນ ແລະນຳໃຊ້ເປັນບ່ອນອີງໃນການຈັດຕັ້ງປະຕິບັດຕໍ່ໄປ.
3. ໄດ້ປັບປຸງຂໍ້ຕົກລົງຂອງລັດຖະມົນຕີວ່າການ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຫ້ອງການ ຍທຂ 51 ເມືອງເປົ້າໝາຍທົດລອງ ສະບັບເລກທີ 16942/ຍທຂ, ລົງວັນທີ 11/10/2012, ພ້ອມທັງໄດ້ຈັດສົ່ງຂໍ້ຕົກລົງດັ່ງກ່າວໄປໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດແລ້ວ. ຊຶ່ງຂໍ້ຕົກລົງດັ່ງ ກ່າວໄດ້ກຳນົດໜ້າທີ່ ແລະຂອບເຂດສິດຂອງຫ້ອງການ ຍທຂ 51 ເມືອງເປົ້າໝາຍໃຫ້ກວ້າງກວ່າເກົ່າ ໂດຍການມອບວຽກ ແລະຄວາມຮັບຜິດຊອບໃໝ່ໆເພີ່ມເຕີມເປັນຕົ້ນ:
   - ການດຳເນີນການແກ້ໄຂສະພາບສຸກເສີນຕາມເສັ້ນທາງຫລວງແຫ່ງຊາດ, ທາງຫລວງແຂວງ ແລະທາງຫລວງເມືອງ ທີ່ຢູ່ພາຍໃນເມືອງຂອງຕົນທັນທີທີ່ເກີດມີເຫດການ.
   - ການຄຸ້ມຄອງວຽກງານທາງນ້ຳ, ຄຸ້ມຄອງຊັບສິນທີ່ດິນຄົມມະນາຄົມ ແລະເຂດສະຫງວນຂອງທາງໃນຂອບເຂດເມືອງຂອງຕົນ.

- ການຄຸ້ມຄອງ ກວດກາ ສູນກວດກາເຕັກນິກລົດ; ຮ້ານສ້ອມແປງລົດ; ຈັດຕັ້ງການຂຶ້ນທະບຽນລົດຈັກ, ລົດໄຖນາ ແລະທະບຽນເຮືອ; ສອບເສັງການຂັບຂີ່ລົດຈັກ ໃນຂອງເຂດເມືອງຂອງຕົນ.
- ການອອກອະນຸຍາດປຸກສ້າງ ຕາມການແບ່ງຄວາມຮັບຜິດຊອບລະຫວ່າງພະແນກ ຍທຂ ແຂວງ ແລະ ຫ້ອງການ ຍທຂ ເມືອງ ແລະອື່ນໆ

4. ໄດ້ມີຄຳສັ່ງຂອງລັດຖະມົນຕີວ່າການ ວ່າດ້ວຍການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານການລົງທຶນຂອງຂະແໜງ ຍທຂ ປະຈຳສົກປີ 2012-2013 ທີ່ຕິດພັນກັບການເຮັດທົດລອງສາມສ້າງຂອງຂະແໜງ ຍທຂ, ສະບັບເລກທີ 17013/ຍທຂ, ລົງວັນທີ 12/10/2012.
5. ໄດ້ສົມທົບກັບອົງການປົກຄອງແຂວງຫລວງພະບາງ ຈັດກອງປະຊຸມເຮັດທົດລອງສາມສ້າງຢູ່ແຂວງຫລວງພະບາງ ລະຫວ່າງວັນທີ 11-12/10/2012, ໂດຍການເຜີຍແຜ່ຂໍ້ຕົກລົງຂອງລັດຖະມົນຕີວ່າການ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຫ້ອງການ ຍທຂ 51 ເມືອງເປົ້າໝາຍທົດລອງ ສະບັບເລກທີ 16942/ຍທຂ, ລົງວັນທີ 11/10/2012 ແລະຄົ້ນຄວ້າປະກອບຄວາມເຫັນໃສ່ຮ່າງບົດແນະນຳຂອງພະແນກ ຍທຂ ແຂວງຫລວງພະບາງ ວ່າດ້ວຍການເຮັດທົດລອງສາມສ້າງຂອງຂະແໜງ ຍທຂ ຢູ່ແຂວງຫລວງພະບາງ. ຊຶ່ງກອງປະຊຸມດັ່ງກ່າວແມ່ນມີຄວາມໝາຍສຳຄັນຢ່າງຍິ່ງ ທີ່ເປັນບາດກ້າວເລີ່ມຕົ້ນໃນການຈັດຕັ້ງເຮັດທົດລອງສາມສ້າງຂອງຂະແໜງ ຍທຂ ຢູ່ທ້ອງຖິ່ນ ແລະຈະນຳໄປຜັນຂະຫຍາຍກັບບັນດາແຂວງອື່ນໆຕໍ່ໄປ.

- **ແຜນການໃນເດືອນຕໍ່ໄປ ແຕ່ວັນທີ 15/10-15/11/2012:**

1. ສົມທົບກັບອົງການປົກຄອງນະຄອນຫລວງວຽງຈັນ ໃນການລົງເຮັດວຽກທົດລອງຕົວຈິງຢູ່ພະແນກ ຍທຂ ນະຄອນຫລວງວຽງຈັນ, ເມືອງຈັນທະບູລີ, ສີສັດຕະນາກ ແລະສັງທອງ ໃນເດືອນ 10/2012. ສ່ວນແຂວງອື່ນໆຈະແຈ້ງບັນຊີໜ້າວຽກຕ່າງໆໃຫ້ກ່ອນ ພ້ອມທັງປະສານສົມທົບກັນເພື່ອກຽມພ້ອມຈັດຕັ້ງປະຕິບັດ.
2. ໃຫ້ບັນດາຫົວໜ້າກົມ, ກອງ ທີ່ກ່ຽວຂ້ອງ ພ້ອມດ້ວຍພະນັກງານວິຊາການ ລົງນຳຊ່ວຍພະແນກ ຍທຂ ນະຄອນຫລວງວຽງຈັນ ແລະຫ້ອງການ ຍທຂ ບັນດາເມືອງເປົ້າໝາຍ ເພື່ອປະຕິບັດບັນດາໜ້າວຽກຕາມຄຳສັ່ງແນະນຳ. ພ້ອມກັນນັ້ນ, ກໍ່ໃຫ້ບັນດາກົມກອງ ສ້າງປຶ້ມຄູ່ມືສະເພາະຂອງແຕ່ລະຂົງເຂດວຽກງານເຊັ່ນ: ວຽກຂົວທາງ, ຂົນສົ່ງ, ເຄຫາ-ຜັງເມືອງ, ໂຍທາທິການທາງນ້ຳ ແລະອື່ນໆ ໂດຍການເຮັດບົດບັນທຶກມອບຮັບລະຫວ່າງບັນກົມ ແລະພະແນກ ຍທຂ ບັນດາແຂວງ ແລະນະຄອນຫລວງວຽງຈັນຄັກແນ່.
3. ປັບປຸງຂໍ້ຕົກລົງຂອງລັດຖະມົນຕີວ່າການ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງພະແນກ ຍທຂ ແຂວງ ແລະນະຄອນຫລວງ ພ້ອມທັງສົ່ງໃຫ້ບັນດາພະແນກ ຍທຂ ແຂວງ, ເຈົ້າແຂວງ ແລະເຈົ້າຄອງນະຄອນຫລວງ ເພື່ອປະກອບຄວາມເຫັນ.
4. ກະກຽມລົງສົມທົບກັບອົງການປົກຄອງບັນດາແຂວງພາກເໜືອ ເພື່ອລົງເຜີຍແຜ່ເຊື່ອມຊຶມນິຕິກຳຕ່າງໆຂອງກະຊວງ ແລະປຶ້ມຄູ່ມືຂອງແຕ່ລະຂົງເຂດວຽກງານຢູ່ບັນດາແຂວງ ຊີ້ນຳໃຫ້ແຕ່ລະແຂວງແບ່ງຄວາມຮັບຜິດຊອບນຳກັນໃຫ້ຈະແຈ້ງ ໂດຍແບ່ງເປັນແຕ່ລະພາກດັ່ງນີ້:
   - ພາກເໜືອ (1): ຈັດທີ່**ແຂວງອຸດົມໄຊ** (ໂດຍເຊີນພະແນກ ຍທຂ ແລະຫ້ອງການ ຍທຂ ບັນດາເມືອງເຮັດທົດລອງຈາກແຂວງບໍ່ແກ້ວ, ຫລວງນ້ຳທາ ແລະຜົ້ງສາລີເຂົ້າຮ່ວມ)
   - ພາກເໜືອ (2): ຈັດທີ່**ແຂວງຊຽງຂວາງ** (ໂດຍເຊີນພະແນກ ຍທຂ ແລະຫ້ອງການ ຍທຂ ບັນດາເມືອງເຮັດທົດລອງຈາກແຂວງໄຊຍະບູລີ ແລະແຂວງຫົວພັນເຂົ້າຮ່ວມ).

- ພາກກາງ: ຈັດທີ່**ແຂວງບໍລິຄໍາໄຊ** (ໂດຍເຊີນພະແນກ ຍທຂ ແລະຫ້ອງການ ຍທຂ ບັນດາເມືອງເຮັດທົດລອງຈາກແຂວງວຽງຈັນ, ຄໍາມ່ວນ ແລະສະຫວັນນະເຂດເຂົ້າຮ່ວມ).
- ພາກໃຕ້: ຈັດທີ່**ແຂວງຈໍາປາສັກ** (ໂດຍເຊີນພະແນກ ຍທຂ ແລະຫ້ອງການ ຍທຂ ບັນດາເມືອງເຮັດທົດລອງຈາກແຂວງສາລະວັນ, ເຊກອງ ແລະອັດຕະປືເຂົ້າຮ່ວມ).

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ,**

**ຫົວໜ້າຄະນະວິຊາການຊ່ວຍວຽກທົດລອງສາມສ້າງກະຊວງ ຍທຂ**

ດຣ ສັນຕິສຸກ ສິມມາລາວົງ

<u>**ສໍາເນົານໍາສົ່ງ:**</u>

- ຄະນະຊີ້ນໍາຊອບເຮັດທົດລອງສາມສ້າງ ກະຊວງ ຍທຂ ທ່ານລະ — 01 ສະບັບ
- ສໍາເນົາເກັບມ້ຽນ — 02 ສະບັບ